ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ ເລກທີ 52 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2024

# ແຈ້ງການ

ເຖິງ: ທ່ານ ຄະນະບໍດີ ຄະນະພະຍາບານສາດ, ມວສ

ເລື່ອງ: ການຂຶ້ນທະບຽນເອົາໃບອະນຸຍາດເຄື່ອນໄຫວວິຊາຊີບພະຍາບານ ແລະ ຜະດຸງຄັນ ສຳລັບຜູ້ທີ່ຜ່ານການສອບເສັງລະດັບຊາດຄັ້ງທີ 4.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງຜົນການສອບເສັງລະດັບຊາດ ສຳລັບພະຍາບານ ຄັ້ງທີ 4 ເລກທີ 46, ລົງວັນທີ 16 ມິຖຸນາ 2024.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງຜົນການສອບເສັງລະດັບຊາດ ສຳລັບຜະດຸງຄັນ ຄັ້ງທີ 4 ເລກທີ 47, ລົງວັນທີ 16 ມິຖຸນາ 2024.

ສະພາຄຸ້ມຄອງວິຊາຊີບປິ່ນປົວ (ສວປ) ມີຈຸດປະສົງແຈ້ງມາຍັງທ່ານ ເພື່ອຊ່ວຍແຈ້ງໃຫ້ພະຍາບານ ແລະ ຜະດຸງຄັນຜູ້ທີ່ຜ່ານການສອບເສັງລະດັບຊາດຄັ້ງທີ 4 ດັ່ງລາຍຊື່ທີ່ມີໃນຂໍ້ຕົກລົງຂໍ້ວ່າດ້ວຍການຮັບຮອງຜົນການສອບເສັງລະດັບຊາດ ສຳລັບພະຍາບານ ແລະ ຜະດຸງຄັນ ໃຫ້ພົວພັນເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຊຶ່ງມີລາຍລະອຽດດັ່ງນີ້:

1. ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ຈະນຳສົ່ງໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວພ້ອມຄັດຕິດລາຍຊື່ໃຫ້ແຕ່ລະສູນສອບເສັງເພື່ອແຈກຢາຍໃນວັນທີ 1 ກໍລະກົດ 2024;
2. ໃຫ້ແຕ່ລະສູນສອບເສັງຊ່ວຍແຈ້ງໃຫ້ຜູ້ທີ່ຜ່ານການສອບເສັງເຂົ້າມາຈ່າຍຄ່າຂຶ້ນທະບຽນ ແລະ ຄ່າເອກະສານການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ;
3. ຄ່າຂຶ້ນທະບຽນເອົາໃບອະນຸຍາດເຄື່ອນໄຫວວິຊາຊີບ ແມ່ນ 300.000 ກີບ ແລະ ຄ່າເອກະສານ 35.000 ກີບ ລວມທັງໝົດ 335,000 ກີບ;
4. ໃນເງິນຈຳນວນ 335,000 ກີບ ໃຫ້ພາກສ່ວນທີ່ກ່ຽວຂ້ອງຫັກເງິນຈຳນວນ 5,000 ກີບ ເພື່ອເປັນງົບປະມານໃນການບໍລິຫານ;
5. ການຮັບເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຈະຕ້ອງເຊັນຮັບ ແລະ ຈ່າຍເງິນຕາມທີ່ແຈ້ງໃນຂໍ້ທີ 3;
6. ຫຼັງຈາກສຳເລັດການແຈກຢາຍໃບອະນຸຍາດເຄື່ອນໄຫວວິຊາຊີບສຳເລັດແລ້ວໃຫ້ພາກສ່ວນກ່ຽວຂ້ອງໂອນເງິນຈຳນວນ 330,000 ກີບ/ຄົນ ໃຫ້ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ;

ເຊັນແທນ ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ

ກະຊວງສາທາລະນະສຸກ ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສຈ ດຣ ຈັນເພັງ ທຳມະວົງ

**ຕິດຕໍ່ປະສານງານ**

ບຸນປະສິດ ຄຳກອງ 5986 8071

ຕົ້ນ ບຸສາ 9539 6733

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ ເລກທີ 52 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2024

# ແຈ້ງການ

ເຖິງ: ທ່ານ ຫົວໜ້າພະແນກສາທາລະນະສຸກແຂວງໃນຂອບເຂດທົ່ວປະເທດ

ທ່ານ ຜູ້ອຳນວຍການ ວິທະຍາໄລ ວິທະຍາສາດ ສຸຂະພາບ ແລະ ໂຮງຮຽນສາທາລະນະສຸກ

ເລື່ອງ: ການຂຶ້ນທະບຽນເອົາໃບອະນຸຍາດເຄື່ອນໄຫວວິຊາຊີບພະຍາບານ ແລະ ຜະດຸງຄັນ ສຳລັບຜູ້ທີ່ຜ່ານການສອບເສັງລະດັບຊາດຄັ້ງທີ 4.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງຜົນການສອບເສັງລະດັບຊາດ ສຳລັບພະຍາບານ ຄັ້ງທີ 4 ເລກທີ 46, ລົງວັນທີ 16 ມິຖຸນາ 2024.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງຜົນການສອບເສັງລະດັບຊາດ ສຳລັບຜະດຸງຄັນ ຄັ້ງທີ 4 ເລກທີ 47, ລົງວັນທີ 16 ມິຖຸນາ 2024.

ສະພາຄຸ້ມຄອງວິຊາຊີບປິ່ນປົວ (ສວປ) ມີຈຸດປະສົງແຈ້ງມາຍັງທ່ານ ເພື່ອຊ່ວຍແຈ້ງໃຫ້ພະຍາບານ ແລະ ຜະດຸງຄັນຜູ້ທີ່ຜ່ານການສອບເສັງລະດັບຊາດຄັ້ງທີ 4 ດັ່ງລາຍຊື່ທີ່ມີໃນຂໍ້ຕົກລົງຂໍ້ວ່າດ້ວຍການຮັບຮອງຜົນການສອບເສັງລະດັບຊາດ ສຳລັບພະຍາບານ ແລະ ຜະດຸງຄັນ ໃຫ້ພົວພັນເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປົວປົວຊຶ່ງມີລາຍລະອຽດດັ່ງນີ້:

1. ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ຈະນຳສົ່ງໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວພ້ອມຄັດຕິດລາຍຊື່ໃຫ້ແຕ່ລະສູນສອບເສັງເພື່ອແຈກຢາຍໃນວັນທີ 1 ກໍລະກົດ 2024;
2. ໃຫ້ແຕ່ລະສູນສອບເສັງຊ່ວຍແຈ້ງໃຫ້ຜູ້ທີ່ຜ່ານການສອບເສັງເຂົ້າມາຈ່າຍຄ່າຂຶ້ນທະບຽນ ແລະ ຄ່າເອກະສານການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ;
3. ຄ່າຂຶ້ນທະບຽນເອົາໃບອະນຸຍາດເຄື່ອນໄຫວວິຊາຊີບ ແມ່ນ 300.000 ກີບ ແລະ ຄ່າເອກະສານ 35.000 ກີບ ລວມທັງໝົດ 335,000 ກີບ;
4. ໃນເງິນຈຳນວນ 335,000 ກີບ ໃຫ້ພາກສ່ວນທີ່ກ່ຽວຂ້ອງຫັກເງິນຈຳນວນ 5,000 ກີບ ເພື່ອເປັນງົບປະມານໃນການບໍລິຫານ;
5. ການຮັບເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວຈະຕ້ອງເຊັນຮັບ ແລະ ຈ່າຍເງິນຕາມທີ່ແຈ້ງໃນຂໍ້ທີ 3;
6. ຫຼັງຈາກສຳເລັດການແຈກຢາຍໃບອະນຸຍາດເຄື່ອນໄຫວວິຊາຊີບສຳເລັດແລ້ວໃຫ້ພາກສ່ວນກ່ຽວຂ້ອງໂອນເງິນຈຳນວນ 330,000 ກີບ/ຄົນ ໃຫ້ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ;

**(ເຊັນແທນ) ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສຈ ດຣ ຈັນເພັງ ທຳມະວົງ

**ຕິດຕໍ່ປະສານງານ**

ບຸນປະສິດ ຄຳກອງ 5986 8071

ຕົ້ນ ບຸຜາ 9539 6733